ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

02 67
ເລກທີ /PTL/2018

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2018

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 7/2018

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03/4/2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/ຕລຊລ, ລົງວັນທີ07/1/2011.

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 7/2018 ວັນທີ 15 ພະຈິກ 2018, ເວລາ 14:00ໂມງ ທີ່ຫ້ອງປະຊຸມ ສຳນັກງານ ປທລ ໂດຍມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງລາຍລະອຽດລຸ່ມນີ້:

ວາລະທີ 1: ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານຄັ້ງທີ 6/2018, ເມື່ອວັນທີ 29 ສິງຫາ 2018;

ວາລະທີ 2: ຮັບຮອງເອົາບົດສະຫຼຸບທາງດ້ານການເງິນປະຈຳໄຕມາດ 3/2018 ທີ່ໄດ້ຮັບການຮັບຮອງຈາກຝ່າຍບັນຊີ, ຝ່າຍກວດກາພາຍໃນ ແລະ ຜູ້ອຳນວຍການຂອງບໍລິສັດ;

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ